ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

========000========

ເລກທີ:.191/2022/ບປລ

ນະຄອນຫຼວງວຽງຈັນ, ວັນທີ:..................
'17 NOV 2022

# ແຈ້ງການ

**ເຖິງ:** ລູກຄ້າຂອງບໍລິສັດ ອາລີອັນສ໌ ປະກັນໄພລາວ ຈຳກັດ ທຸກທ່ານ.

**ເລື່ອງ:** ການນຳໃຊ້ສັນຍາປະກັນໄພແບບເອເລັກໂຕຼນິກຂອງບໍລິສັດ ອາລີອັນສ໌ ປະກັນໄພລາວ ຈຳກັດ ຜ່ານ ແອັບ My Insurance.

- ອີງຕາມ ກົດໝາຍວ່າດ້ວຍ ການປະກັນໄພ ສະບັບປັບປຸງ, ລົງວັນທີ 29/11/2019;
- ອີງຕາມ ໜັງສືແຈ້ງຕອບ ເຫັນດີຂອງຫ້ອງການກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເລກທີ 2317/ຫກຊ.ກຕຂ, ລົງວັນທີ: 09/12/2020;
- ອີງຕາມ ໜັງສືແຈ້ງເຫັນດີຂອງກົມປະຕິຮູບ ລັດວິສາຫະກິດ ແລະ ການປະກັນໄພ, ກະຊວງການເງິນ ເລກທີ 0045/ຄລປ, ລົງວັນທີ: 13/01/2021;
- ອີງຕາມ ແຈ້ງການຂອງກົມຕຳຫຼວດຈະລາຈອນ, ກະຊວງປ້ອງການຄວາມສະຫງົບ ເລກທີ 053/ກຈຈ, ລົງວັນທີ 17/10/2022.

ບໍລິສັດ ອາລີອັນສ໌ ປະກັນໄພລາວ ຈຳກັດ ຂໍແຈ້ງມາຍັງລູກຄ້າທຸກທ່ານກ່ຽວກັບການນຳໃຊ້ສັນຍາປະກັນໄພແບບເອເລັກໂຕຼນິກຜ່ານ ແອບ My Insurance ດັ່ງຕໍ່ໄປນີ້:

- ການຈັດຕັ້ງປະຕິບັດສັນຍາປະກັນໄພແບບເອເລັກໂຕຼນິກແມ່ນໄດ້ຖືກຮັບຮູ້ໂດຍເຈົ້າໜ້າທີ່ຈະລາຈອນໃນຂອບເຂດທົ່ວປະເທດ.
- ສັນຍາປະກັນໄພແບບເອເລັກໂຕຼນິກສາມາດສະແດງໃຫ້ເຈົ້າໜ້າທີ່ຈະລາຈອນຜ່ານ ແອບ My Insurance ຈາກໂທລະສັບມືຖືຂອງທ່ານ.

ດັ່ງນັ້ນ, ບໍລິສັດ ອາລີອັນສ໌ ປະກັນໄພລາວ ຈຳກັດ ຈຶ່ງໄດ້ອອກແຈ້ງການສະບັບນີ້ມາຍັງລູກຄ້າທຸກທ່ານຂອງບໍລິສັດ ເພື່ອເປັນບ່ອນອີງສຳລັບຄວາມສະດວກ ໃນການນຳໃຊ້ສັນຍາປະກັນໄພແບບເອເລັກໂຕຼນິກ.

ດ້ວຍຄວາມເຄົາລົບ ແລະ ນັບຖື

**ບໍລິສັດ ອາລີອັນສ໌ ປະກັນໄພລາວ ຈຳກັດ**

ຮ.ກ **ຜູ້ອຳນວຍການ**

ການ ບໍລິສັດ ອາລີອັນສ໌ ປະກັນໄພລາວ ຈຳກັດ Allianz Insurance Laos Co.,LTD ນະຄອນຫຼວງວຽງຈັນ

Vanida SAVADDY
Deputy CEO